**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ

ເລກທີ 472 /ລບ

ນະຄອນຫຼວງວຽງຈັນ, ວັນທີ 30.12.2019

# ດຳລັດ
# ວ່າດ້ວຍ ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍ ວ່າດ້ວຍອາຫານ ສະບັບເລກທີ 33/ສພຊ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມ ໜັງສືສະເໜີ ຂອງກະຊວງສາທາລະນະສຸກ ສະບັບເລກທີ 0021/ສທ, ລົງວັນທີ 09 ມັງກອນ 2020.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບ ການຄຸ້ມຄອງ ແລະ ກວດກາ ວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ເພື່ອເຮັດໃຫ້ ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ປົກປ້ອງ, ສົ່ງເສີມ ແລະ ສະໜັບສະໜູນການລ້ຽງລູກດ້ວຍນ້ຳນົມແມ່, ເຮັດໃຫ້ເດັກອ່ອນ ແລະ ເດັກນ້ອຍ ມີໂພຊະນາການທີ່ດີ, ມີການຈະເລີນເຕີບໂຕທາງດ້ານຮ່າງກາຍ ແລະ ພັດທະນາການທາງດ້ານມັນສະໝອງ ກາຍເປັນຊັບພະຍາກອນມະນຸດທີ່ມີຄຸນນະພາບ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

### ມາດຕາ 2 ການອະທິບາຍຄຳສັບ

ຄຳສັບ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເດັກອ່ອນ** ໝາຍເຖິງ ເດັກ ແຕ່ມື້ເກີດ ຫາ ອາຍຸ ສິບສອງ ເດືອນ;
2. **ເດັກນ້ອຍ** ໝາຍເຖິງ ເດັກທີ່ມີອາຍຸ ແຕ່ ສິບສອງ ເດືອນ ຫາ ສາມສິບຫົກ ເດືອນ;
3. **ອາຫານເສີມ** ໝາຍເຖິງ ອາຫານສຳລັບເດັກ ທີ່ເໝາະສົມ ໃນການໃຫ້ຄວບຄູ່ກັບນ້ຳນົມແມ່ ເປັນຕົ້ນ

ນົມຜົງເດັກອ່ອນ ຫຼື ນົມຜົງສູດຕໍ່ເນື່ອງສຳລັບເດັກອ່ອນ ແຕ່ອາຍຸ ຫົກ ເດືອນ ຫາ ອາຍຸ ສາມສິບຫົກ ເດືອນ ລວມທັງອາຫານເສີມທີ່ສາມາດປຸງແຕ່ງໄດ້ ຢ່າງງ່າຍດາຍຢູ່ເຮືອນ ໂດຍນຳໃຊ້ສ່ວນປະສົມທີ່ມີຢູ່ໃນທ້ອງຖິ່ນ;

4. **ນົມຜົງສຳລັບເດັກອ່ອນ** ໝາຍເຖິງ ນົມ ຫຼື ຜະລິດຕະພັນທີ່ຄ້າຍຄືນົມ ທີ່ຜະລິດຈາກສັດ ຫຼື ພືດ ໃນຮູບແບບອຸດສາຫະກຳ ຕາມມາດຕະຖານກົດລະຫັດອາຫານສາກົນ ເພື່ອຕອບສະໜອງດ້ານໂພຊະນາການ ຂອງເດັກ ແຕ່ເກີດ ຫາ ອາຍຸ ຫົກ ເດືອນ ແລະ ນົມຜົງສູດສຳລັບເດັກ ທີ່ມີອາຍຸເກີນກວ່າ ຫົກເດືອນ ຂຶ້ນໄປ ກໍຕ້ອງຕອບສະໜອງດ້ານໂພຊະນາການ ແລະ ນົມຜົງສູດສະເພາະທາງດ້ານການແພດ;

5. **ນົມຜົງຕໍ່ເນື່ອງ** ໝາຍເຖິງ ນົມ ຫຼື ຜະລິດຕະພັນທີ່ຄ້າຍຄືນົມທີ່ຜະລິດ ຈາກສັດ ຫຼື ພືດ ໃນຮູບແບບ ອຸດສາຫະກຳ ຕາມມາດຕະຖານກົດລະຫັດອາຫານສາກົນ ຊຶ່ງໄດ້ຮັບການຢັ້ງຢືນ ຫຼື ສົ່ງເສີມວ່າເປັນນົມຜົງສູດ ຕໍ່ເນື່ອງ ທີ່ເໝາະສົມໃນການລ້ຽງເດັກທີ່ມີອາຍຸຫຼາຍກວ່າ ຫົກ ເດືອນ ຂຶ້ນໄປ;

6. **ນົມຜົງສຳລັບເດັກນ້ອຍ** ໝາຍເຖິງ ນົມ ຫຼື ຜະລິດຕະພັນທີ່ຄ້າຍຄືນົມທີ່ຜະລິດ ຈາກສັດ ຫຼື ພືດ ໃນຮູບແບບອຸດສາຫະກຳ ຕາມມາດຕະຖານກົດລະຫັດອາຫານສາກົນ ຊຶ່ງໄດ້ຮັບການຢັ້ງຢືນ ຫຼື ສົ່ງເສີມວ່າ ເປັນນົມຜົງສູດຕໍ່ເນື່ອງ ທີ່ເໝາະສົມໃນການລ້ຽງເດັກທີ່ມີອາຍຸແຕ່ ສິບສອງ ເດືອນ ຂຶ້ນໄປ ຫຼື ອາດເອີ້ນວ່າ ເປັນນົມຜົງສູດສຳລັບການຈະເລີນເຕີບໂຕຂອງເດັກ;

7. **ນົມຜົງສູດສຳລັບການຈະເລີນເຕີບໂຕ** ໝາຍເຖິງ ຜະລິດຕະພັນນົມທີ່ມີທາດໂປຼຕີອິນຕ່ຳ ແລະ ໄດ້ເພີ່ມວິຕາມິນ ແລະ ເກືອແຮ່ ເພື່ອໃຫ້ເໝາະສົມໃນການລ້ຽງເດັກທີ່ມີອາຍຸແຕ່ ສິບສອງເດືອນ ຫາ ສາມສິບ ຫົກເດືອນ;

8. **ພາຊະນະບັນຈຸຜະລິດຕະພັນອາຫານ** ໝາຍເຖິງ ວັດຖຸປະກອນທີ່ຖືກນຳໃຊ້ເພື່ອບັນຈຸ ຫຼື ຫຸ້ມຫໍ່ ຜະລິດຕະພັນ ເພື່ອການຂາຍ;

9. **ຜູ້ຜະລິດ** ໝາຍເຖິງ ບຸກຄົນ, ບໍລິສັດ ຫຼື ຫົວໜ່ວຍທຸລະກິດ ໃດໜຶ່ງ ທີ່ມີສ່ວນຮ່ວມໃນການດຳເນີນ ທຸລະກິດກ່ຽວກັບການຜະລິດ ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ໃດໜຶ່ງ ບໍ່ວ່າຈະເປັນທາງກົງ, ຜ່ານຕົວແທນຈຳໜ່າຍ ຫຼື ຜ່ານບຸກຄົນ ໃດໜຶ່ງ ພາຍໃຕ້ການຕົກລົງ ເຫັນດີຮ່ວມກັນໃນການດຳເນີນທຸລະກິດດັ່ງກ່າວ;

10. **ການຈຳໜ່າຍ** ໝາຍເຖິງ ການຊື້ຂາຍ ດ້ວຍການຂາຍຍົກ ຫຼື ຂາຍຍ່ອຍ, ການໃຫ້ເຊົ່າ ຫຼື ການແຈກຢາຍ ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ລວມທັງການເອົາໃຫ້ ບຸກຄົນ, ຄອບຄົວທີ່ມີຄວາມຈຳເປັນ;

11. **ການຕະຫຼາດ** ໝາຍເຖິງ ການຂາຍ ຫຼື ການຈຳໜ່າຍ, ການໂຄສະນາ ແລະ ການເຜີຍແຜ່ ຂໍ້ມູນ ຂ່າວສານ ກ່ຽວກັບຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ໃນທາງກົງ ແລະ ທາງອ້ອມ;

12. **ພະນັກງານການຕະຫຼາດ** ໝາຍເຖິງ ບຸກຄົນ ທີ່ມີໜ້າທີ່ໃນການເຮັດການຕະຫຼາດກ່ຽວກັບຜະລິດຕະ ພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ໃດໜຶ່ງ ຫຼື ຫຼາຍປະເພດ;

13. **ການໂຄສະນາ** ໝາຍເຖິງ ການສະເໜີດ້ວຍວິທີການໃດໜຶ່ງ ໂດຍທາງກົງ ຫຼື ທາງອ້ອມ ເພື່ອຈູດ ປະສົງຊຸກຍູ້, ຈູງໃຈ, ສົ່ງເສີມ ໃຫ້ຄົນຊື້ ຫຼື ນຳໃຊ້ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ ໂດຍຜ່ານ ບຸກຄົນ, ພາຫະນະສື່ມວນຊົນ, ສື່ເອເລັກໂຕຣນິກ, ການຕິດປ້າຍ, ກະດານຂ່າວ ຫຼື ວິທີການອື່ນ;

14. **ການສົ່ງເສີມ** ໝາຍເຖິງ ການນຳໃຊ້ວິທີການ ໃດໜຶ່ງ ໂດຍທາງກົງ ຫຼື ທາງອ້ອມໃນການຊຸກຍູ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃດໜຶ່ງ ຊັກຊວນໃຫ້ແມ່ ຫຼື ຜູ້ດູແລເດັກ ຊື້ ຫຼື ນຳໃຊ້ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ໂດຍມີການອ້າງອີງເຖິງຊື່ຍີ່ຫໍ້ ຫຼື ບໍ່ ກໍຕາມ;

15. **ສັນຍາລັກ** ໝາຍເຖິງ ເຄື່ອງໝາຍ ແລະ ຮູບພາບ ທີ່ລະບຸເຖິງຊື່ບໍລິສັດ ຫຼື ຜະລິດຕະພັນ ໃດໜຶ່ງ;

16. **ສະຫຼາກ** ໝາຍເຖິງ ເຄື່ອງໝາຍ, ຮູບພາບ ຫຼື ຂໍ້ຄວາມທີ່ຕິດຢູ່ພາຊະນະບັນຈຸອາຫານ ເພື່ອຈຸດປະສົງໃຫ້ຂໍ້ມູນກ່ຽວກັບ ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ, ການນຳໃຊ້, ການເກັບຮັກສາ, ຜູ້ຜະລິດ ແລະ ຜູ້ຈຳໜ່າຍ;

17. **ນົມຜົງສູດສຳລັບເດັກອ່ອນທາງດ້ານການແພດ** ໝາຍເຖິງ ນົມຜົງທາງດ້ານການແພດ ເພື່ອປິ່ນປົວເດັກອ່ອນ ແລະ ເດັກນ້ອຍ.

### ມາດຕາ 3 ຫຼັກການກ່ຽວກັບວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ

ໃນການເຄື່ອນໄຫວວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງນະໂຍບາຍ, ກົດໝາຍ, ຍຸດທະສາດ ແລະ ແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ;

2. ຮັບປະກັນ ການປົກປ້ອງ, ສົ່ງເສີມ ແລະ ສະໜັບສະໜູນ ການລ້ຽງລູກດ້ວຍນ້ຳນົມແມ່;

3. ຮັບປະກັນການຈຳໜ່າຍ, ການໃຫ້ຂໍ້ມູນ ຂ່າວສານ, ການໂຄສະນາເຜີຍແຜ່ກ່ຽວກັບວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ດຳເນີນຢ່າງຖືກຕ້ອງ, ຍຸຕິທຳ, ໂປ່ງໃສ ແລະ ກວດສອບໄດ້;

4. ສອດຄ່ອງກັບມາດຕະຖານສາກົນ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

### ມາດຕາ 4 ຂອບເຂດການນຳໃຊ້ດຳລັດ

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບ ວຽກງານກ່ຽວກັບຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ ຢູ່ ສປປ ລາວ.

## ໝວດທີ 2
## ວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບ ອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ

### ມາດຕາ 5 ຜະລິດຕະພັນອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ

ຜະລິດຕະພັນອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ ແມ່ນ ຜະລິດຕະພັນນົມທີ່ໃຊ້ຄວບຄູ່ກັບ ນ້ຳນົມແມ່ ຫຼື ໃຊ້ແທນນ້ຳນົມແມ່ ສຳລັບເດັກອ່ອນ ແຕ່ອາຍຸ ຫົກ ເດືອນ ຫາ ອາຍຸສາມສິບຫົກ ເດືອນ ເປັນຕົ້ນ ນົມຜົງສຳລັບລ້ຽງເດັກອ່ອນ, ນົມຜົງສຳລັບເດັກນ້ອຍ ຫຼື ນົມຜົງສູດສຳລັບການຈະເລີນເຕີບໂຕຂອງເດັກ, ຜະລິດຕະພັນອາຫານເສີມ ແລະ ຜະລິດຕະພັນອາຫານອື່ນ ທີ່ກະຊວງສາທາລະນະສຸກ ກຳນົດໃຫ້ເປັນຜະລິດຕະພັນອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ.

### ມາດຕາ 6 ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ

ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ແມ່ນ ຜະລິດຕະພັນທີ່ໃຊ້ບັນຈຸອາຫານ ຫຼື ນຳໃຊ້ໃນການໃຫ້ອາຫານ ເດັກອ່ອນ ແລະ ເດັກນ້ອຍ ເປັນຕົ້ນ ເຕົ້ານົມຢາງ, ຫົວນົມຢາງ, ແວ່ດູດ ແລະ ຜະລິດຕະພັນອື່ນ ທີ່ກະຊວງສາທາລະນະສຸກ ກຳນົດໃຫ້ເປັນອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ.

### ມາດຕາ 7 ວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ

ວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ ມີ ດັ່ງນີ້:

1. ການໃຫ້ຂໍ້ມູນ ຂ່າວສານ ກ່ຽວກັບການລ້ຽງລູກດ້ວຍນ້ຳນົມແມ່ ແລະ ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

2. ການຄວບຄຸມ ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ.

## ໝວດທີ 3
## ການໃຫ້ຂໍ້ມູນ ຂ່າວສານ ກ່ຽວກັບການລ້ຽງລູກດ້ວຍນ້ຳນົມແມ່, ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ

### ມາດຕາ 8 ການໃຫ້ຂໍ້ມູນ ຂ່າວສານ ກ່ຽວກັບການລ້ຽງລູກດ້ວຍນ້ຳນົມແມ່

ການໃຫ້ຂໍ້ມູນ ຂ່າວສານ ກ່ຽວກັບການລ້ຽງລູກດ້ວຍນ້ຳນົມແມ່ ແມ່ນ ການໃຫ້ຄວາມຮູ້ ດ້ວຍການໃຫ້ຄຳປຶກສາ, ຄຳແນະນຳ ກ່ຽວກັບການລ້ຽງລູກດ້ວຍນ້ຳນົມແມ່ ໂດຍການໂຄສະນາເຜີຍແຜ່ຢ່າງທົ່ວເຖິງດ້ວຍຫຼາຍຮູບການ ເປັນຕົ້ນ ການໂຄສະນາເຜີຍແຜ່ ທາງປາກເປົ່າ, ພາຫະນະສື່ມວນຊົນ.

ຂະແໜງການສາທາລະນະສຸກ ຕ້ອງປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການໃຫ້ຂໍ້ມູນ ຂ່າວສານ ກ່ຽວກັບການລ້ຽງລູກດ້ວຍນ້ຳນົມແມ່.

### ມາດຕາ 9 ການໃຫ້ຂໍ້ມູນ ຂ່າວສານ ກ່ຽວກັບຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ

ການໃຫ້ຂໍ້ມູນ ຂ່າວສານ ກ່ຽວກັບຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ ແມ່ນ ການໃຫ້ຄວາມຮູ້ ແລະ ຄຳແນະນຳ ກ່ຽວກັບ ການເລືອກ ແລະ ວິທີນຳໃຊ້ ຜະລິດຕະພັນດັ່ງກ່າວ ແກ່ແມ່ ຫຼື ຜູ້ດູແລເດັກ ໃນກໍລະນີທີ່ແມ່ບໍ່ສາມາດລ້ຽງລູກດ້ວຍນ້ຳນົມແມ່ເອງໄດ້.

ແພດ, ພະຍາບານ ຫຼື ພະນັກງານທີ່ກ່ຽວຂ້ອງ ຕ້ອງໃຫ້ຄວາມຮູ້ ແລະ ຄຳແນະນຳ ກ່ຽວກັບການເລືອກຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ລວມທັງວິທີການໃຊ້ຜະລິດຕະພັນດັ່ງກ່າວ ໃຫ້ຖືກຕ້ອງ ແກ່ແມ່ ຫຼື ຜູ້ດູແລເດັກ ເປັນລາຍບຸກຄົນ ເປັນຕົ້ນ ການປຸງແຕ່ງ, ການໃຫ້ນ້ຳນົມ, ການເກັບຮັກສາ, ການອະນາໄມອຸປະກອນທີ່ນຳໃຊ້, ສິ່ງທີ່ຄວນລະວັງ.

**ມາດຕາ 10 ເນື້ອໃນ ຂອງຂໍ້ມູນ ຂ່າວສານ ກ່ຽວກັບການລ້ຽງດູເດັກອ່ອນ ແລະ ເດັກນ້ອຍ**

ຂໍ້ມູນ ຂ່າວສານ ກ່ຽວກັບການລ້ຽງເດັກອ່ອນ ແລະ ເດັກນ້ອຍ ດ້ວຍນ້ຳນົມແມ່, ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ຕ້ອງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຄວາມສຳຄັນ, ຜົນດີ ແລະ ຄຸນປະໂຫຍດທາງດ້ານໂພຊະນາການຂອງນ້ຳນົມແມ່ ໃນການລ້ຽງລູກດ້ວຍນ້ຳນົມແມ່ ຢ່າງຕໍ່ເນື່ອງ ເພື່ອສຸຂະພາບ ແລະ ພັດທະນາການເຕີບໃຫຍ່ຂອງເດັກອ່ອນ ແລະ ເດັກນ້ອຍ, ປ້ອງກັນບໍ່ໃຫ້ເປັນພະຍາດຖອກທ້ອງ, ອັກເສບລະບົບຫາຍໃຈ, ການຂາດສານອາຫານ;

2. ການລ້ຽງລູກດ້ວຍນ້ຳນົມແມ່ ພຽງຢ່າງດຽວ ແຕ່ມື້ເກີດ ຫາ ອາຍຸ ຫົກ ເດືອນ ແລະ ສືບຕໍ່ ໃຫ້ລູກກິນນ້ຳນົມແມ່ ຈົນຮອດ ອາຍຸ ຊາວສີ່ ເດືອນ ຫຼື ຫຼາຍກວ່ານັ້ນ ຊຶ່ງຖືວ່າແມ່ນສິ່ງທີ່ດີທີ່ສຸດໃນການລ້ຽງລູກ;

3. ການບີບນ້ຳນົມແມ່ໃສ່ຈອກແລ້ວປ້ອນໃຫ້ລູກກິນ ໃນກໍລະນີແມ່ບໍ່ສາມາດໃຫ້ລູກດູດນົມໄດ້ ແລະ ການເຮັດໃຫ້ມີນ້ຳນົມແມ່ຄືນໃໝ່ ເພື່ອລ້ຽງລູກ;

4. ວິທີການ ແລະ ເຫດຜົນ ກ່ຽວກັບຄຳແນະນຳ ຂອງການລ້ຽງລູກດ້ວຍຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ລວມທັງຜົນກະທົບຂອງການລ້ຽງລູກດ້ວຍຜະລິດຕະພັນ ແລະ ອຸປະກອນດັ່ງກ່າວ;

5. ຄວາມສຳຄັນຂອງອາຫານເສີມສຳລັບເດັກອ່ອນ ແລະ ເດັກນ້ອຍ ຫຼັງອາຍຸ ຫົກ ເດືອນ ແລະ ການປຸງແຕ່ງອາຫານເສີມແບບງ່າຍດາຍຢູ່ເຮືອນ ໂດຍນຳໃຊ້ສ່ວນປະສົມທີ່ມີຢູ່ໃນທ້ອງຖິ່ນ.

ເນື້ອໃນຂໍ້ມູນ ຂ່າວສານ ກ່ຽວກັບການລ້ຽງລູກ ເດັກອ່ອນ ແລະ ເດັກນ້ອຍ ຕ້ອງເປັນພາສາລາວ, ຈະແຈ້ງ, ເຂົ້າໃຈງ່າຍ, ຖືກຕ້ອງ ຕາມຄວາມເປັນຈິງ ແລະ ຂໍ້ມູນດ້ານວິທະຍາສາດ, ເຕັກນິກ ທີ່ກ່ຽວຂ້ອງ, ບໍ່ມີເນື້ອໃນ, ເຄື່ອງໝາຍ ຫຼື ສັນຍາລັກ ໃດໜຶ່ງ ທີ່ຈູງໃຈ ຫຼື ມີລັກສະນະຈູງໃຈໃຫ້ລ້ຽງລູກ ດ້ວຍຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ.

## ໝວດທີ 4
## ການຄວບຄຸມ ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບ ອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ

**ມາດຕາ 11 ການຄວບຄຸມ ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ**

ການຄວບຄຸມ ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ ແມ່ນການກຳນົດມາດຕະການຄວບຄຸມດ້ານວິຊາການກ່ຽວກັບ ເຕັກນິກ, ມາດຕະຖານ ສຳລັບການໂຄສະນາ, ການຈຳໜ່າຍ, ການກິດສະຫຼາກ ແລະ ການບໍລິຈາກ ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ.

**ມາດຕາ 12 ການໂຄສະນາຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ**

ການໂຄສະນາຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ບໍ່ວ່າຢູ່ໃນສະຖານທີ່ໃດ, ຜ່ານສື່ມວນຊົນທຸກປະເພດ ແລະ ກິດຈະກຳການຕະຫຼາດທຸກຮູບແບບ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການສາທາລະນະສຸກ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

ການໂຄສະນາຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ມີ ເນື້ອໃນ ດັ່ງນີ້:

1.ຂໍ້ມູນທີ່ເຜີຍແຜ່ຕ້ອງ ເປັນພາສາລາວ, ຈະແຈ້ງ, ເຂົ້າໃຈງ່າຍ, ມີລັກສະນະວິທະຍາສາດ ແລະ ບໍ່ມີລັກສະນະເກີນຄວາມເປັນຈິງ, ບໍ່ມີຮູບພາບ ຫຼື ເນື້ອໃນທີ່ມີລັກສະນະແບບດຶງດູດ, ຈູງໃຈກ່ຽວກັບການລ້ຽງເດັກອ່ອນ ແລະ ເດັກນ້ອຍ;

2.ບໍ່ມີລັກສະນະຊວນເຊື່ອ, ສົ່ງເສີມ ຫຼື ສະໜັບສະໜູນ ໃຫ້ໃຊ້ອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ບໍ່ວ່າໂດຍທາງກົງ ຫຼື ທາງອ້ອມ ຫຼື ເປັນສິ່ງທີ່ໃຫ້ມີການເຊື່ອມໂຍງ ລະຫວ່າງ ອາຫານເສີມ ກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

3.ບໍ່ໃຫ້ມີຊື່, ເຄື່ອງໝາຍ ຫຼື ສັນຍາລັກ ໃດໜຶ່ງ ຂອງຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ເພື່ອສົ່ງເສີມທາງການຕະຫຼາດ, ການຂາຍ, ຈຳໜ່າຍ ຜະລິດຕະພັນດັ່ງກ່າວ.

### ມາດຕາ 13 ການຈຳໜ່າຍຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ

ການຈຳໜ່າຍຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການສາທາລະນະສຸກ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ບໍ່ອະນຸຍາດໃຫ້ຈຳໜ່າຍ ຫຼື ຊື້ຂາຍ ຢູ່ສະຖານທີ່ ດັ່ງນີ້:

1. ເຮືອນລ້ຽງເດັກ, ໂຮງຮຽນອະນຸບານ;
2. ສະຖານທີ່ບໍລິການສຸຂະພາບ;
3. ສະຖານທີ່ອື່ນ ຕາມທີ່ກະຊວງສາທາລະນະສຸກກຳນົດ.

### ມາດຕາ 14 ການຕິດສະຫຼາກຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ

ການຕິດສະຫຼາກຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການ ກ່ຽວກັບອາຫານ ໃນແຕ່ລະໄລຍະ ແລະ ປະຕິບັດຕາມກົດລະຫັດອາຫານສາກົນ.

ກະຊວງສາທາລະນະສຸກ ເປັນຜູ້ກຳນົດ ລັກສະນະ, ຮູບແບບ ແລະ ການຕິດສະຫຼາກຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ.

ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ທີ່ ຊື້, ຂາຍ, ຈຳໜ່າຍ, ຈໍລະຈອນ, ບໍລິການ ແລະ ບໍລິຈາກ ໃນ ສປປ ລາວ ຕ້ອງມີສະຫຼາກເປັນພາສາລາວ ແລະ/ຫຼື ພາສາຕ່າງປະເທດ ທີ່ບົ່ງບອກຂໍ້ມູນຢ່າງຖືກຕ້ອງກ່ຽວກັບຜະລິດຕະພັນດັ່ງກ່າວ.

### ມາດຕາ 15 ການບໍລິຈາກຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ

ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ທີ່ຈະນຳມາບໍລິຈາກ ຫຼື ຊ່ວຍເຫຼືອ ຢູ່ ສປປ ລາວ ຕ້ອງຮັບປະກັນຄຸນນະພາບ ແລະ ຄວາມປອດໄພ ໂດຍມີການຢັ້ງຢືນຈາກປະເທດຕົ້ນກຳເນີດ ແລະ ຕ້ອງໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

### ມາດຕາ 16 ເນື້ອໃນສະຫຼາກນົມຜົງສຳລັບເດັກອ່ອນ, ເດັກນ້ອຍ ແລະ ນົມຜົງສູດຕາມການຈະເລີນເຕີບໂຕ

ສະຫຼາກນົມຜົງສຳລັບເດັກອ່ອນ, ເດັກນ້ອຍ ແລະ ນົມຜົງສູດຕາມການຈະເລີນເຕີບໂຕ ນອກຈາກມີເນື້ອໃນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍອາຫານແລ້ວ ຍັງຕ້ອງມີເນື້ອໃນ ດັ່ງນີ້:

1. ນຳໃຊ້ຕົວໜັງສື, ສັນຍາລັກ ຫຼື ຮູບພາບ ທີ່ຈະແຈ້ງ ແລະ ເຂົ້າໃຈງ່າຍ;
2. ຄຳແນະນຳກ່ຽວກັບການປຸງແຕ່ງທີ່ເໝາະສົມ;

3. ເງື່ອນໄຂທີ່ຈຳເປັນ ໃນການເກັບຮັກສາ, ກ່ອນ ແລະ ຫຼັງ ເປີດກ່ອງ ຫຼື ຖົງທີ່ບັນຈຸຜະລິດຕະພັນ ລວມທັງອຸນຫະພູມ ແລະ ສະພາບແວດລ້ອມ;

4. ສ່ວນປະກອບ ແລະ ຂໍ້ມູນດ້ານໂພຊະນາການ;

5. ມີຮູບພາບ, ຮູບແຕ້ມ ຫຼື ຮູບພາບ ສະເພາະແຕ່ການສະແດງວິທີການປຸງແຕ່ງ.

ເນື້ອໃນຂອງສະຫຼາກນົມຜົງສຳລັບເດັກອ່ອນ, ເດັກນ້ອຍ ແລະ ນົມຜົງສູດຕາມການຈະເລີນເຕີບໂຕ ຕ້ອງບໍ່ເຮັດໃຫ້ ເຂົ້າໃຈຜິດ ຫຼື ເຊື່ອວ່າ ນົມຜົງສຳລັບເດັກອ່ອນ, ເດັກນ້ອຍ ແລະ ນົມຜົງສູດຕາມການຈະເລີນເຕີບໂຕ ມີຄວາມເທົ່າທຽມກັນ ຫຼື ມີຄຸນຄ່າສູງກວ່ານ້ຳນົມແມ່ ແລະ ບໍ່ມີເນື້ອໃນທີ່ເປັນສິ່ງຈູງໃຈໃຫ້ຜູ້ເປັນແມ່ບໍ່ຢາກລ້ຽງລູກດ້ວຍນ້ຳນົມແມ່.

**ມາດຕາ 17 ເນື້ອໃນສະຫຼາກຜະລິດຕະພັນອາຫານເສີມສຳລັບເດັກອ່ອນ ແລະ ເດັກນ້ອຍ**

ສະຫຼາກຜະລິດຕະພັນອາຫານເສີມ ສຳລັບເດັກອ່ອນ ແລະ ເດັກນ້ອຍ ນອກຈາກມີເນື້ອໃນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍອາຫານແລ້ວ ຍັງຕ້ອງມີເນື້ອໃນ ດັ່ງນີ້:

1. ເນື້ອໃນຂໍ້ສັງເກດທີ່ສຳຄັນ:

- ນ້ຳນົມແມ່ ແມ່ນອາຫານທີ່ດີທີ່ສຸດສຳລັບເດັກອ່ອນ ແລະ ເດັກນ້ອຍ ເພາະມີຄຸນຄ່າທາງໂພຊະນາການຄົບຖ້ວນ;

- ການປຸງແຕ່ງຕາມສ່ວນປະສົມ ທີ່ຕ້ອງປະຕິບັດໃຫ້ຖືກຕ້ອງ ເພື່ອບໍ່ໃຫ້ເປັນອັນຕະລາຍຕໍ່ສຸຂະພາບເດັກອ່ອນ ແລະ ເດັກນ້ອຍ.

2. ເນື້ອໃນກ່ຽວກັບຄຳເຕືອນ:

- ບໍ່ຄວນຕື່ມນ້ຳຕານ, ນ້ຳເຜິ້ງ ຫຼື ສິ່ງທີ່ໃຫ້ລົດຫວານ ເພາະອາດຈະເຮັດໃຫ້ເດັກອ່ອນ ແລະ ເດັກນ້ອຍມີພາວະນ້ຳໜັກເກີນ ແລະ ແຂ້ວເດັກບໍ່ແຂງແຮງ;

- ບໍ່ຄວນປະສົມອາຫານເສີມໃສ່ນ້ຳທີ່ບໍ່ທັນຕົ້ມສຸກ ຫຼື ໃຊ້ເຕົ້ານົມ ທີ່ບໍ່ໄດ້ຜ່ານການຕົ້ມ ຫຼື ປະສົມອາຫານເສີມ ໃນອັດຕາສ່ວນທີ່ບໍ່ຖືກຕ້ອງ ຊຶ່ງຈະມີຜົນເຮັດໃຫ້ເດັກອ່ອນ ແລະ ເດັກນ້ອຍເຈັບປ່ວຍໄດ້;

- ບໍ່ຄວນເກັບຮັກສາອາຫານເສີມທີ່ປະສົມແລ້ວ ເກີນກຳນົດເວລາ, ໃນອຸນຫະພູມ ແລະ ສະພາບແວດລ້ອມທີ່ບໍ່ເໝາະສົມ ຊຶ່ງຈະເປັນອັນຕະລາຍຕໍ່ສຸຂະພາບເດັກອ່ອນ ແລະ ເດັກນ້ອຍ;

3. ຕາຕະລາງຄຳແນະນຳກ່ຽວກັບການປຸງແຕ່ງອາຫານເສີມສຳລັບເດັກອ່ອນ, ເດັກນ້ອຍ ຫຼື ອາຫານເສີມສຳລັບການຈະເລີນເຕີບໂຕ;

4. ສ່ວນປະກອບ ແລະ ຂໍ້ມູນດ້ານໂພຊະນາການຂອງອາຫານເສີມ.

ເນື້ອໃນຂອງສະຫຼາກອາຫານເສີມສຳລັບເດັກອ່ອນ ແລະ ເດັກນ້ອຍ ຕ້ອງບໍ່ເຮັດໃຫ້ເຂົ້າໃຈຜິດ ຫຼື ເຊື່ອວ່າ ອາຫານເສີມດັ່ງກ່າວ ມີຄວາມເທົ່າທຽມກັນ ຫຼື ມີຄຸນຄ່າສູງກວ່ານ້ຳນົມແມ່ ແລະ ບໍ່ມີເນື້ອໃນທີ່ເປັນສິ່ງຈູງໃຈໃຫ້ຜູ້ເປັນແມ່ບໍ່ຢາກລ້ຽງລູກດ້ວຍນ້ຳນົມແມ່.

**ມາດຕາ 18 ເນື້ອໃນສະຫຼາກນົມບໍ່ມີໄຂມັນ, ໄຂມັນຕ່ຳ, ນົມຂຸ້ນຫວານ ແລະ ນົມຜົງສູດມາດຕະຖານ**

ເນື້ອໃນສະຫຼາກນົມບໍ່ມີໄຂມັນ, ໄຂມັນຕ່ຳ, ນົມຂຸ້ນຫວານ ແລະ ນົມຜົງສູດມາດຕະຖານ ໃນຮູບແບບຜົງ ຫຼື ແຫຼວ ຕ້ອງມີຄຳແນະນຳ ຫຼື ຄຳເຕືອນສະເພາະທີ່ຊັດເຈນ, ຈະແຈ້ງ, ມີຕົວໜັງສືທີ່ມີຂະໜາດ ຢ່າງໜ້ອຍ

ສອງ ມີລີແມັດ ແລະ ບໍ່ໃຫ້ຫຼຸດ ໜຶ່ງສ່ວນສາມ ຂອງຂະໜາດຕົວໜັງສືຂອງຊື່ນົມດັ່ງກ່າວ ເພື່ອບໍ່ໃຫ້ໃຊ້ນົມບໍ່ມີໄຂມັນ, ໄຂມັນຕ່ຳ, ນົມຂຸ້ນຫວານ ແລະ ນົມຜົງສູດມາດຕະຖານ ລ້ຽງເດັກອ່ອນ.

### ມາດຕາ 19 ເນື້ອໃນສະຫຼາກເຕົ້ານົມ, ຫົວນົມຢາງ ແລະ ແວ່ດູດ

ສະຫຼາກ ເຕົ້ານົມ, ຫົວນົມຢາງ ແລະ ແວ່ດູດ ຕ້ອງມີເນື້ອໃນ ດັ່ງນີ້:

1. ຂໍ້ສັງເກດທີ່ສຳຄັນກ່ຽວກັບເກນອາຍຸ;

2. ຄຳເຕືອນທີ່ສຳຄັນກ່ຽວກັບ ອຸນຫະພູມ, ປະລິມານ ແລະ ການນຳໃຊ້ ຊຶ່ງແມ່ ຫຼື ຜູ້ດູແລເດັກ ຕ້ອງປະຕິບັດ ຢ່າງເຂັ້ມງວດ;

3. ຄຳແນະນຳສຳລັບການທຳຄວາມສະອາດ ແລະ ການຂ້າເຊື້ອ ໃນຮູບແບບຕົວອັກສອນ ແລະ ຕາຕະລາງແນະນຳສຳລັບການປຸງແຕ່ງ;

4. ປະໂຫຍກທີ່ອະທິບາຍກ່ຽວກັບການປ້ອນນ້ຳນົມລູກດ້ວຍຈອກນ້ອຍ ແມ່ນການປ້ອນທີ່ຖືກວິທີກວ່າເຕົ້ານົມ;

5. ຊື່ ແລະ ທີ່ຢູ່ຜູ້ຜະລິດ ຫຼື ຜູ້ຈຳໜ່າຍ.

## ໝວດທີ 5
## ຂໍ້ຫ້າມ

### ມາດຕາ 20 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດ

ຫ້າມ ຜູ້ດຳເນີນທຸລະກິດ ເປັນຕົ້ນ ຜູ້ຜະລິດ, ຜູ້ຈຳໜ່າຍ ຫຼື ຜູ້ຕາງໜ້າຜູ້ຜະລິດ ມີພຶດຕິກຳ ດັ່ງນີ້:

1. ມອບຕົວຢ່າງຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

2. ມອບ ຫຼື ແຈກຢາຍເຄື່ອງມື, ອຸປະກອນທຸກປະເພດ ແລະ ສະໜອງຂໍ້ມູນ ຂ່າວສານ ທີ່ເປັນການສົ່ງເສີມໃຫ້ນຳໃຊ້ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

3. ຊື້ຂາຍ, ຈຳໜ່າຍ ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ໃນຮູບແບບການວາງສະແດງ, ແຈກບັດຫຼຸດລາຄາ, ແຈກແຖມ ຫຼື ຫຼຸດລາຄາ;

4. ໃຫ້ການສະໜັບສະໜູນ ເຫດສະການ, ການປະກວດ, ການໃຫ້ບໍລິການສາຍດ່ວນໃນການໃຫ້ຄຳປຶກສາ ຫຼື ການປຸກລະດົມທີ່ພົວພັນກັບສຸຂະພາບຈະເລີນພັນ, ການຖືພາ, ການເກີດລູກ, ການລ້ຽງເດັກອ່ອນ ແລະ ເດັກນ້ອຍ ທີ່ມີຈຸດປະສົງໃນການໂຄສະນາ ແລະ ສົ່ງເສີມຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 21 ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ

ຫ້າມພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ຕຳແໜ່ງ, ໜ້າທີ່, ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ທວງເອົາ, ຂໍເອົາ, ໃຫ້, ຮັບສິນບົນ ຫຼື ເປັນສື່ກາງ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

2. ປົກປ້ອງ, ຊຸກເຊື່ອງ ຫຼື ປົດບັງ, ຮ່ວມກັນກະທຳຜິດກັບຜູ້ດຳເນີນທຸລະກິດກ່ຽວກັບຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

3. ເປີດເຜີຍຄວາມລັບຂອງລັດ ຫຼື ທາງລັດຖະການ, ຂໍ້ມູນຂອງຜູ້ດຳເນີນທຸລະກິດ, ກີດໜ່ວງ, ຖ່ວງດຶງ, ປອມແປງເອກະສານ, ຂາດຄວາມຮັບຜິດຊອບຕໍ່ການຄວບຄຸມຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

4. ແຈກຢາຍ ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ໃຫ້ແກ່ ແມ່ຍິງຖືພາ, ແມ່ລູກອ່ອນ ຫຼື ຜູ້ດູແລເດັກ ໂດຍບໍ່ໄດ້ຮັບອະນຸຍາດ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 22 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່ ຫຼື ຂັດຂວາງ ການປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່ກ່ຽວຂ້ອງ;

2. ແຈກຢາຍ, ຈຳໜ່າຍ, ຊື້ຂາຍ, ເກັບຮັກສາ ຫຼື ວາງສະແດງ, ໂຄສະນາຂາຍຜະລິດຕະພັນອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ທີ່ບໍ່ມີສະຫຼາກເປັນພາສາລາວ;

3. ໂຄສະນາທຸກຮູບແບບ ທີ່ເປັນການຊຸກຍູ້ ແລະ ສົ່ງເສີມ ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ໂດຍບໍ່ໄດ້ຮັບອະນຸຍາດ;

4. ໃຫ້ ຫຼື ຮັບ ການບໍລິຈາກ ຫຼື ຊ່ວຍເຫຼືອ ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ໂດຍບໍ່ໄດ້ຮັບອະນຸຍາດ;

5. ເປັນສື່ກາງໃນການໃຫ້ ແລະ ຮັບ ສິນບົນ ແກ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

6. ມອບຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ເປັນຂອງຂວັນ ແກ່ພະນັກງານສາທາລະນະສຸກ ຫຼື ທຸກພາກສ່ວນທີ່ກ່ຽວຂ້ອງ;

7. ໃຫ້ ຫຼື ຮັບ ການສະໜັບສະໜູນ, ສະໜອງງົບປະມານ ແກ່ການຄົ້ນຄວ້າ ຫຼື ກອງປະຊຸມ, ສຳມະນາ ລວມທັງທຶນການສຶກສາ ໂດຍບໍ່ໄດ້ຮັບອະນຸຍາດ;

8. ມີພຶດຕິກຳອື່ນ ທີ່ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 6
## ການຄຸ້ມຄອງ ແລະ ການກວດກາ

### ມາດຕາ 23 ອົງການຄຸ້ມຄອງ ແລະ ກວດກາ

ກະຊວງສາທາລະນະສຸກເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນໃຈກາງປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ປະກອບດ້ວຍ:

1. ກະຊວງສາທາລະນະສຸກ;

2. ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ;

3. ຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 24 ສິດ ແລະ ໜ້າທີ່ ຂອງກະຊວງສາທາລະນະສຸກ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ກະຊວງສາທາລະນະສຸກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງ ນະໂຍບາຍ, ຍຸດທະສາດ ແລະ ນິຕິກຳ ກ່ຽວກັບວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ເພື່ອນຳສະເໜີລັດຖະບານພິຈາລະນາ;

2. ຜັນຂະຫຍາຍນະໂຍບາຍ, ຍຸດທະສາດ ແລະ ນິຕິກຳດັ່ງກ່າວ ໃຫ້ເປັນແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ພ້ອມທັງຊີ້ນຳໃນການຈັດຕັ້ງປະຕິບັດ;

3. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

4. ໂຄສະນາ, ເຜີຍແຜ່ນະໂຍບາຍ, ຍຸດທະສາດ ແລະ ນິຕິກຳ ກ່ຽວກັບວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ແລະ ການລ້ຽງລູກດ້ວຍ  ນ້ຳນົມແມ່ ໃນຂອບເຂດທົ່ວປະເທດ;

5. ຊຸກຍູ້, ຊີ້ນຳ, ຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ໃນຂອບເຂດທົ່ວປະເທດ;

6. ປົກປ້ອງ, ສົ່ງເສີມ ແລະ ສະໜັບສະໜູນການລ້ຽງລູກດ້ວຍນ້ຳນົມແມ່, ສົ່ງເສີມການປຸງແຕ່ງອາຫານເສີມທີ່ປອດໄພ ດ້ວຍອາຫານສົດ ທີ່ມີໃນທ້ອງຖິ່ນສຳລັບເດັກອາຍຸແຕ່ ຫົກ ເດືອນຂຶ້ນໄປ ແລະ ເດັກນ້ອຍ;

7. ພິຈາລະນາແກ້ໄຂຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງກ່ຽວກັບມາດຕະຖານ, ຄຸນນະພາບ ແລະ ຄວາມປອດໄພ ຂອງຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

8. ປະສານສົມທົບກັບ ກະຊວງ, ອົງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

9. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ, ສາກົນ ກ່ຽວກັບວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

10. ສະຫຼຸບ ແລະ ລາຍງານວຽກງານຂອງຕົນ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່  ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງ ລະບຽບການ ກ່ຽວກັບວຽກງານການຄວບຄຸມຜະລິດຕະພັນອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ເພື່ອນຳສະເໜີເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາ;

2. ຜັນຂະຫຍາຍນະໂຍບາຍ, ຍຸດທະສາດ ແລະ ລະບຽບການ ໃຫ້ເປັນແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ພ້ອມຈັດຕັ້ງປະຕິບັດ;

3. ຄົ້ນຄວ້າສ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຜະລິດຕະພັນອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ເພື່ອສະເໜີເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາ;

4. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານຄວບຄຸມຜະລິດຕະພັນອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ແລະ ການປົກປ້ອງ, ການສົ່ງເສີມ, ການສະໜັບສະໜູນ ການລ້ຽງລູກດ້ວຍນ້ຳນົມແມ່;

5. ຊຸກຍູ້, ຊີ້ນຳ, ຕິດຕາມ,ກວດກາ ການຈັດຕັ້ງປະຕິບັດວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

6. ປົກປ້ອງ, ສົ່ງເສີມ ແລະ ສະໜັບສະໜູນການລ້ຽງລູກດ້ວຍນ້ຳນົມແມ່ ພ້ອມທັງສົ່ງເສີມ ການປຸງແຕ່ງອາຫານເສີມທີ່ປອດໄພ ດ້ວຍອາຫານສົດທີ່ມີໃນທ້ອງຖິ່ນສຳລັບເດັກ ອາຍຸແຕ່ ຫົກ ເດືອນ ຂຶ້ນໄປ ແລະ ເດັກນ້ອຍ;

7. ພິຈາລະນາແກ້ໄຂຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງກ່ຽວກັບມາດຕະຖານ, ຄຸນນະພາບ ແລະ ຄວາມປອດໄພ ຂອງຜະລິດຕະພັນອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

8. ປະສານສົມທົບກັບ ພະແນກ, ອົງການທຽບເທົ່າພະແນກຂັ້ນແຂວງ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

9. ປະສານສົມທົບກັບອົງການຈັດຕັ້ງສາກົນ ກ່ຽວກັບວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ຕາມການມອບໝາຍ;

10. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ອົງການປົກຄອງຂັ້ນແຂວງ ແລະ ກະຊວງສາທາລະນະສຸກ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 26 ສິດ ແລະ ໜ້າທີ່ ຂອງຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ

ໃນການຄຸ້ມຄອງ ແລະ ກວດກາ ວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ ມີສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

2. ຜັນຂະຫຍາຍນະໂຍບາຍ, ຍຸດທະສາດ ແລະ ລະບຽບການ ໃຫ້ເປັນແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ພ້ອມຈັດຕັ້ງປະຕິບັດ;

3. ຄົ້ນຄວ້າສ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ເພື່ອສະເໜີເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພິຈາລະນາ;

4. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ຍຸດທະສາດ ແລະ ລະບຽບການ ກ່ຽວກັບການປົກປ້ອງ ສົ່ງເສີມ ແລະ ສະໜັບສະໜູນການລ້ຽງລູກດ້ວຍນ້ຳນົມແມ່ ແລະ ວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

5. ຊຸກຍູ້, ຊີ້ນຳ, ຕິດຕາມ,ກວດກາ ການຈັດຕັ້ງປະຕິບັດວຽກງານຜະລິດຕະພັນອາຫານ ແລະ ອຸປະກອນ ກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

6. ປົກປ້ອງ, ສົ່ງເສີມ ແລະ ສະໜັບສະໜູນການລ້ຽງລູກດ້ວຍນ້ຳນົມແມ່ ພ້ອມທັງສົ່ງເສີມການປຸງແຕ່ງອາຫານເສີມທີ່ປອດໄພ ດ້ວຍອາຫານສົດທີ່ມີໃນທ້ອງຖິ່ນສຳລັບເດັກ ອາຍຸແຕ່ ຫົກ ເດືອນ ຂຶ້ນໄປ ແລະ ເດັກນ້ອຍ;

7. ຮັບຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງກ່ຽວກັບມາດຕະຖານ, ຄຸນນະພາບ ແລະ ຄວາມປອດໄພ ຂອງຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ຫຼື ສະເໜີຂຶ້ນເທິງຂອງຕົນພິຈາລະນາແກ້ໄຂ;

8. ປະສານສົມທົບກັບ ຫ້ອງການ, ອົງການທຽບເທົ່າຫ້ອງການຂັ້ນເມືອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ອົງການປົກຄອງຂັ້ນເມືອງ ແລະ ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

10. ໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 27 ສິດ ແລະ ໜ້າທີ່ ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ

ໃນການຈັດຕັ້ງປະຕິບັດວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ ໃຫ້ການຮ່ວມມື, ຈັດຕັ້ງປະຕິບັດ, ຕິດຕາມ, ກວດກາ ແລະ ປະສານສົມທົບກັບຂະແໜງການສາທາລະນະສຸກ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

### ມາດຕາ 28 ເນື້ອໃນການກວດກາ

ການກວດກາວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດນະໂຍບາຍ, ຍຸດທະສາດ ແລະ ລະບຽບການທີ່ກ່ຽວຂ້ອງ ກັບວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

2. ກວດກາເນື້ອໃນສະຫຼາກ, ການຕິດສະຫຼາກ, ການໂຄສະນາ ຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;

3. ການປະຕິບັດວຽກງານ ຂອງອົງການຈັດຕັ້ງ, ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ.

### ມາດຕາ 29 ຮູບການກວດກາ

ການກວດກາວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ດຳເນີນດ້ວຍຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;

2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ.

ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈໍາເປັນ ໂດຍແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຮູ້ລ່ວງໜ້າ ຢ່າງໜ້ອຍຊາວສີ່ຊົ່ວໂມງ.

ການກວດກາແບບກະທັນຫັນ ແມ່ນ ການກວດກາໃນເວລາທີ່ມີຄວາມຈໍາເປັນ ແລະ ຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຮູ້ລ່ວງໜ້າ.

ໃນເວລາດໍາເນີນການກວດການັ້ນ ເປົ້າໝາຍທີ່ຖືກກວດກາ ຕ້ອງໃຫ້ການຮ່ວມມື ແລະ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 30 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດໍາລັດສະບັບນີ້ ເປັນຕົ້ນ ການເປັນແບບຢ່າງ, ການປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຈັດຕັ້ງປະຕິບັດວຽກງານຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສໍາລັບເດັກອ່ອນ ແລະ ເດັກນ້ອຍ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 31 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ລະເມີດດໍາລັດສະບັບນີ້ ເປັນຕົ້ນ ການຊຸກຍູ້, ສົ່ງເສີມໃຫ້ມີຄວາມເຂົ້າໃຈ ແລະ ເຊື່ອວ່າ ການລ້ຽງລູກດ້ວຍຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສໍາລັບເດັກນ້ອຍ ແລະ ເດັກອ່ອນ ດີກວ່າການລ້ຽງລູກດ້ວຍນໍ້ານົມແມ່ ຫຼື ການລະເມີດຂໍ້ຫ້າມກ່ຽວກັບຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສໍາລັບເດັກນ້ອຍ ແລະ ເດັກອ່ອນ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ແລ້ວແຕ່ກໍລະນີ ເບົາ ຫຼື ໜັກ.

### ມາດຕາ 32 ມາດຕະການສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ລະເມີດດໍາລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ມີລັກສະນະເບົາບາງ ແລະ ເປັນການລະເມີດຄັ້ງທໍາອິດ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ.

### ມາດຕາ 33 ມາດຕະການທາງດ້ານວິໄນ

ພະນັກງານ ແລະ ເຈົ້າໜ້າທີ່ກ່ຽວຂ້ອງ ທີ່ໄດ້ລະເມີດດໍາລັດສະບັບນີ້ ແລະ ລະບຽບການກ່ຽວກັບຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສໍາລັບເດັກນ້ອຍ ແລະ ເດັກອ່ອນ ຊຶ່ງບໍ່ເປັນການກະທໍາຜິດທາງອາຍາ ເປັນຕົ້ນ ຂໍ້ຫ້າມທີ່ມີລັກສະນະເບົາບາງ, ຂາດຄວາມຮັບຜິດຊອບຕໍ່ວຽກງານ ທີ່ຕົນໄດ້ຮັບການມອບໝາຍ ຈະຖືກລົງວິໄນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

### ມາດຕາ 34 ມາດຕະການປັບໃໝ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃດໜຶ່ງ ເປັນຕົ້ນ ຜູ້ຂາຍຍ່ອຍ ແລະ ຂາຍສົ່ງ, ຜູ້ຜະລິດ, ນໍາເຂົ້າ ແລະ ສົ່ງອອກ ທີ່ໄດ້ລະເມີດດໍາລັດສະບັບນີ້ ໃນກໍລະນີເບົາ ຊຶ່ງໄດ້ຜ່ານການສຶກສາອົບຮົມຕາມທີ່ໄດ້ກໍານົດໄວ້

ໃນມາດຕາ 32 ຂອງດຳລັດສະບັບນີ້ ຫຼື ໃນກໍລະນີມີຜົນເສຍຫາຍ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ເປັນຕົ້ນ ການລະເມີດຂໍ້ຫ້າມ ຈະຖືກປັບໃໝ ດັ່ງນີ້:

- ຄັ້ງທີ 1: ເຮັດບົດບັນທຶກ ແລະ ປັບໃໝ 5.000.000 ກີບ ຫາ 50.000.000 ກີບ;
- ຄັ້ງທີ 2: ເຮັດບົດບັນທຶກ ແລະ ປັບໃໝ 50.000.000 ກີບ ຫາ 100.000.000 ກີບ;

ໃນກໍລະນີ ມີຜົນເສຍຫາຍຢ່າງຫຼວງຫຼາຍ ຈະຖືກປັບໃໝແຕ່ 100.000.000 ກີບຂຶ້ນໄປ ພ້ອມທັງໂຈະ ຫຼື ຖອນໃບທະບຽນ ການດຳເນີນທຸລະກິດ ກ່ຽວກັບຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ຕາມການສະເໜີຂອງອົງການຮັບຜິດຊອບວຽກງານດັ່ງກ່າວ.

**ມາດຕາ 35 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດດຳລັດສະບັບນີ້ ຊຶ່ງໄດ້ກໍ່ຄວາມເສຍຫາຍ ຕ້ອງໄດ້ໃຊ້ແທນຄ່າເສຍຫາຍທາງແພ່ງ ທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 36 ມາດຕະການທາງອາຍາ**

ບຸກຄົນ, ນິຕິບຸກຄົນ ທີ່ໄດ້ລະເມີດດຳລັດສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກລົງໂທດຕາມທີ່ໄດ້ກຳນົດໃນປະມວນກົດໝາຍອາຍາ ແລະ ກົດໝາຍອື່ນ ທີ່ກຳນົດໂທດທາງອາຍາ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 37 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງສາທາລະນະສຸກ ເປັນເຈົ້າການ ແລະ ປະສານສົມທົບ ກັບຂະແໜງການທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ໃນການປະຕິບັດດຳລັດສະບັບນີ້ ຕາມພາລະບົດບາດຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 38 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ພາຍຫຼັງໄດ້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ຕົກລົງ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ